# ຄວາມຈິງຕໍ່ມວນຊົນ

Ottawa County Health Department

## ແອນແທຼກ

### ແອນແທຼກຄືຫຍັງ?

ແອນແທຼກເປັນເຊື້ອໂຣກທີ່ເກີດຈາກການແຜ່ລາມ ຂອງເຊື້ອແບັກແທເຣັຍ. ແອນແທຼກມີຢູ່ນຳກັນສາມແບບໃຫຍ່ຄື: ຜີວໜັງ (ຕິດເຊື້ອໂຣກ), ປອດ (ເຂົ້າທາງການຫາຍໃຈ), ແລະເກີດຢູ່ໃນລຳໄສ້.

### ແມ່ນໃຜທີ່ສາມາດຕິດແອນແທຼກ?

ແອນແທຼກບໍ່ແມ່ນໂຣກທີ່ເກີດເປັນປະຈຳຢູ່ສະຫະຣັດ. ແຕ່ເຖິງຢ່າງໃດກໍດີ, ບາງເທື່ອມັນຈະເກີດກັບສັດ ດັ່ງເຊັ່ນ ຝູງງົວ, ແລະເກີດກັບຜູ້ຄົນນຳອີກ.

### ແອນແທຼກແຜ່ລາມແນວໃດ?

ແອນແທຼກອາດແຜ່ລາມໃນວິທີດັ່ງຕໍ່ໄປນີ້:

- ຜີວໜັງ (ຕິດເຊື້ອໂຣກ)
  - ຕິດພົນກັບ:
    - ສັດທີ່ຕິດເຊື້ອໂຣກ, ຫລືຂົນສັດ, ຫລືໜັງສັດ
    - ຜົນຜະລິດຈາກສັດທີ່ຕິດເຊື້ອໂຣກ
    - ດິນທີ່ມີເຊື້ອໂຣກປົນຢູ່ນຳ
- ປອດ (ເຂົ້າທາງການຫາຍໃຈ)
    - ຫາຍໃຈເອົາອາກາດທີ່ເຕັມໄປດ້ວຍເຊື້ອໂຣກແອນແທຼກ
- ເກີດຢູ່ໃນລຳໄສ້
    - ກິນຊີ້ນທີ່ເຮັດບໍ່ສຸກ ຈາກສັດທີ່ຕິດເຊື້ອໂຣກ

ການຕິດເຊື້ອໂຣກ ສາມາດເກີດຂຶ້ນໄດ້ ຜ່ານຜູ້ກໍ່ການຮ້າຍຝາຍເຊື້ອໂຣກ.

ການຕິດຕໍ່ໂຣກແອນແທຼກຈາກຄົນນຶ່ງຫາຄົນນຶ່ງ ຈະເກີດຂຶ້ນນ້ອຍທີ່ສຸດ, ຖ້າເຄີຍມີ.

### ອາການບາງຢ່າງມີຫຍັງແດ່?

ອາການແອນແທຼກຈະແຕກຕ່າງກັນ ຂຶ້ນກັບວິທີຕິດເຊື້ອໂຣກມາໃນທາງໃດ, ແລະຕາມປົກກະຕິແລ້ວ ຈະເຫັນອາການພາຍໃນເຈັດວັນ.

*ຜີວໜັງ (ຕິດເຊື້ອໂຣກ):* ປາກົດວ່າ ຄັນ, ເປັນຕຸ່ມມີນ້ຳ. ພາຍໃນ 1 ຫາ 2 ວັນ ຕຸ່ມເຫລົ່ານັ້ນ ຈະປ່ຽນເປັນຕຸ່ມຝີທີ່ມີສີດຳຢູ່ທາງກາງ. ອ້ອມຮອບຕຸ່ມອາດແດງ, ໄຂ່, ແລະບາງຄັ້ງ ບໍ່ມີອາການເຈັບປວດ.

*ປອດ (ເຂົ້າທາງການຫາຍໃຈ):* ອາການໃນຕອນຕົ້ນຈະຄືກັບເປັນໄຂ້ຫວັດທຳມະດາ. ຫລັງຈາກນັ້ນສອງສາມວັນ ອາການຈະຮ້າຍແຮງຂຶ້ນ ແລະຫາຍໃຈຍາກ. ເມື່ອແອນແທຼກເຂົ້າໄປທາງການຫາຍໃຈ, ສ່ວນຫລາຍແລ້ວ ຈະເຖິງຂັ້ນຕາຍ ຖ້າບໍ່ຮັກສາທັນເວລາ.

*ເກີດຢູ່ໃນລຳໄສ້:* ອາການໃນຕອນຕົ້ນຈະລວມທັງ ປວດຢາກຮາກ, ບໍ່ຢາກກິນເຂົ້າ, ຮາກ, ແລະຄີງຮ້ອນ ຕິດຕາມດ້ວຍການເຈັບທ້ອງນ້ອຍ, ຮາກເປັນເລືອດ, ແລະ ລົງທ້ອງຢ່າງໜັກ.

### ຈະກວດພົບແອນແທຼກໄດ້ແນວໃດ?

ຈະກວດພົບແອນແທຼກໄດ້ຈາກເລືອດ, ຕຸ່ມຕາມ ຜີວໜັງ, ຫລືສິ່ງອອກຈາກປາກຈາກດັງ.

### ຈະຮັກສາແອນແທຼກດ້ວຍວິທີໃດ?

ໃນຕອນຕົ້ນຂອງການຕິດເຊື້ອໂຣກນີ້, ທ່ານໝໍສາມາດໃຊ້ຢາຂ້າເຊື້ອໂຣກເພື່ອຮັກສາ. ແຕ່ຖ້າເມີນເສີຍ, ອາດເຖິງແກ່ຄວາມຕາຍໄດ້.

ຖ້າທ່ານໄດ້ເຂົ້າໃກ້ສິ່ງໃດທີ່ມີເຊື້ອໂຣກນີ້ ແລະ ທ່ານມີອາການທີ່ບົ່ງໄວ້ຂ້າງເທິງ, ໃຫ້ທ່ານໄປຫາໝໍທັນທີ.

### ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບແອນແທຼກ ໃຫ້ຕິດຕໍ່ໄປທີ່:

Ottawa County Health Department
[www.miOttawa.org](http://www.miOttawa.org)

Center for Disease Control and Prevention
[www.bt.cdc.gov/agent/anthrax/](http://www.bt.cdc.gov/agent/anthrax/)
ເລກໂທຣະສັບ: (888) 246-2675

12251 James St., Suite 400
Holland, MI 49424

ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643

ແວບໄຊ: www.miOttawa.org